ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຄັງເງິນແຫ່ງຊາດ

1816 ---18
ເລກທີ : /ຄງຊ
ນະຄອນຫຼວງວຽງຈັນ, ວັນທີ : 26 APR 2018

# ແຈ້ງການ

ເຖິງ : ບັນດາທ່ານ ຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ທີ່ນັບຖື.

ເລື່ອງ : ກະກຽມເຮັດວຽກຮ່ວມກັບ ຄະນະວິຊາການຂອງຄັງເງິນແຫ່ງຊາດທີ່ຈະລົງຊຸກຍູ້ແຜນເຄື່ອນໄຫວຮອບດ້ານລວມທັງວຽກງານວິຊາສະເພາະ ຢູ່ຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ ປະຈຳ 2018.

- ອີງຕາມ ຂໍ້ຕົກລົງຂອງຂອງລັດຖະມົນຕີ ກະຊວງການເງິນ, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງຊາດ ສະບັບເລກທີ 2833/ກງ, ລົງວັນທີ 22 ສິງຫາ 2017.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ, ວ່າດ້ວຍການແຕ່ງຕັ້ງຄະນະພັກ, ຄະນະນຳ ແລະ ຄະນະວິຊາການຄັງເງິນແຫ່ງຊາດ ລົງເຄື່ອນໄຫວຊຸກຍູ້ວຽກງານວິຊາສະເພາະ ຄັງເງິນແຫ່ງຊາດປະຈຳແຂວງ ແລະ ເມືອງ ປີ 2018 ສະບັບເລກທີ 1230/ກງ, ລົງວັນທີ 23 ເມສາ 2018.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະນຳຄັງເງິນແຫ່ງຊາດ ໃນຄັ້ງວັນທີ 25 ເມສາ 2018.

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ການເຄື່ອນໄຫວວຽກງານວິຊາສະເພາະໃນປີ 2018 ບັນລຸຕາມແຜນການລະດັບຄາດໝາຍ ແລະ ມີຜົນສຳເລັດຜົນ ຢ່າງເປັນຮູບປະທຳ, ຄັງເງິນແຫ່ງຊາດ ຂໍແຈ້ງມາຍັງຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ ກະກຽມບັນດາວຽກງານທີ່ຕິດພັນກັບວິຊາສະເພາະຄັງເງິນ ເພື່ອເຮັດວຽກຮ່ວມກັບຄະນະວິຊາການ ຄັງເງິນແຫ່ງຊາດດັ່ງນີ້ :

1. ບົດສະຫຼຸບສະພາບການເຄື່ອນໄຫວວຽກງານຮອບດ້ານຂອງຄັງເງິນແຫ່ງຊາດປະຈຳແຂວງ ແລະ ເມືອງເທດສະບານ, ການຈັດຕັ້ງປະຕິບັດງົບປະມານ04ເດືອນປີ 2018 (ວຽກງານປັບປຸງກົງຈັກການຈັດຕັ້ງຕາມພາລະລະບົດບາດໃໝ່ 2833/ກງ, ລົງວັນທີ 22 ສິງຫາ 2017, ວຽກງານດ້ານບຸກຄະລາກອນ, ວຽກງານດ້ານວິຊາຊາສະເພາະເຊັ່ນ:ວຽກງານບໍລິຫານແຫຼ່ງເງິນ,ວຽກງານກວດກາລາຍຈ່າຍງົບປະມານ, ການບັນຊີ,ການສະຫຼຸບລາຍງານ,ການຈ່າຍລ່ວງໜ້າ,ວຽກງານການພົວພັນກັບຄັງເງິນເມືອງ,ວຽກງານການທັນສາຍຕັ້ງຄັງເງິນ).
2. ສະພາບການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍຕ່າງໆ ຂອງບັນດາພະແນກການອ້ອມຂ້າງແຂວງ ແລະ ບັນດາເມືອງ.
3. ການຈັດຕັ້ງເຜີຍແຜ່ຂະຫຍາຍບັນດານິຕິກຳຕ່າງໆເຊັ່ນ: ກົດໝາຍ, ຄຳສັ່ງ, ແຈ້ງການແນະນຳ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານຄັງເງິນ.

4. ສະພາບການນຳໃຊ້ລະບົບເຄືອຄ່າຍ GFIS (ການບັນທຶກບັນຊີລາຍຮັບ-ລາຍຈ່າຍງົບປະມານ), ວຽກງານບັນຊີຂັ້ນແຂວງ ແລະ ເມືອງ, ການສະຫຼຸບສັງລວມລາຍງານ ແລະ ວຽກງານອື່ນໆ.
5. ກະກຽມບົດບັນທຶກຮ່ວມ ລະຫວ່າງ ຄັງເງິນແຫ່ງຊາດປະຈຳແຂວງ ແລະ ຄັງເງິນແຫ່ງຊາດສູນກາງ (ຕາມບົດບັນທຶກທີ່ຂັດຕິດມາພ້ອມນີ້)
6. ກຳນົດເປົ້າໝາຍຜູ້ເຂົ້າຮ່ວມກອງປະຊຸມ : ຫົວໜ້າ ແລະ ຮອງຫົວໜ້າ ຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ, ຫົວໜ້າຂະແໜງການ 05 ຂະແໜງ ແລະ ວິຊາການຜູ້ເຮັດວຽກຕົວຈິງຂະແໜງລະ 01 ທ່ານ, ຫົວໜ້າຄັງເງິນແຫ່ງຊາດປະຈຳເມືອງເທດສະບານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ ( ລາຍລະອຽດໄດ້ມີຂໍ້ຕົກລົງຂັດຕິດມາພ້ອມນີ້ ).

ຫົວໜ້າຄັງເງິນແຫ່ງຊາດ.

ວັນພອນ ພິມມະສອນ